## ຄຳແນະນຳກ່ຽວກັບການພັດທະນາຕົວເມືອງ

ໃນຫົວຂໍ້ນີ້ ຈະໄດ້ແນະນຳກ່ຽວກັບ ກົດໝາຍການພັດທະນາຕົວເມືອງ, ສະຖາບັນການຈັດຕັ້ງໃນການພັດທະນາຕົວເມືອງ ແລະ ແນວຄິດລິເລີ່ມຂອງການພັດທະນາຕົວເມືອງ.

ເນື້ອໃນຂອງຈົດໝາຍຂ່າວສະບັບນີ້ແມ່ນ **ຜັງເມືອງລວມ (GUP)**.

## ປະເພດ 'ການນຳໃຊ້ທີ່ດິນ' ຢູ່ໃນເຂດທີ່ທ່ານຢູ່ແມ່ນນອນຢູ່ໃນປະເພດໃດ?

ທ່ານເຄີຍໄດ້ຍິນກ່ຽວກັບ ຜັງເມືອງລວມ (GUP) ຫຼືບໍ່? ນະຄອນຫຼວງວຽງຈັນແມ່ນໄດ້ຮັບການພັດທະນາໄປຕາມ 'ແຜນການນຳໃຊ້ທີ່ດິນ' ແລະ ນັ້ນເອີ້ນວ່າ ແຜນຜັງເມືອງລວມ GUP.

GUP ໄດ້ກຳນົດວ່າເຂດໃດແມ່ນຈະຂະຫຍາຍເປັນຕົວເມືອງ, ເຂດໃດແມ່ນເຂດພັດທະນາ ແລະ ເຂດໃດແມ່ນເຂດທີ່ສະຫງວນໄວ້ເພື່ອການປົກປັກຮັກສາທຳມະຊາດ. ການແບ່ງເຂດການນຳໃຊ້ທີ່ດິນຕ່າງໆແມ່ນໄດ້ກຳນົດ ໂດຍອີງຕາມນະໂຍບາຍການນຳໃຊ້ທີ່ດິນ, ຕົວຢ່າງ: "ເຂດປົກປັກຮັກສາເມືອງເກົ່າ", "ເຂດຂະຫຍາຍຕົວເມືອງ", "ເຂດກະສິກຳ", ອື່ນໆ. ນອກຈາກນີ້, ຄວາມສູງ ແລະ ພື້ນທີ່ກໍ່ໄດ້ກຳນົດໄວ້ເຊັ່ນກັນ ແລະ ການກໍ່ສ້າງໃດໆກໍຕາມຈະບໍ່ສາມາດດຳເນີນໄດ້ຖ້າບໍ່ໄດ້ຮັບການອະນຸຍາດເສຍກ່ອນ.

ການກໍ່ສ້າງໂດຍບໍ່ຄຳນຶງເຖິງກົດລະບຽບຈະພາໃຫ້ເກີດການສ້າງເມືອງບໍ່ເປັນລະບຽບ; ແລະ ການນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມ GUP ຈະເຮັດໃຫ້ເປັນຕົວເມືອງສີຂຽວ ແລະ ໜ້າຢູ່.

ຖ້າທ່ານຢາກຮູ້ວ່າເຮືອນ ຫຼື ເຂດທີ່ທ່ານອາໄສຢູ່ນັ້ນນອນຢູ່ໃນເຂດການນຳໃຊ້ທີ່ດິນປະເພດໃດ? ທ່ານສາມາດເຂົ້າເບິ່ງໄດ້ທີ່ເວັບຂໍ້ມູນ VirGo.



ຜັງເມືອງລວມ (GUP) ນະຄອນຫຼວງວຽງຈັນ

## ເຂດການນຳໃຊ້ທີ່ດິນ

ການນຳໃຊ້ທີ່ດິນແມ່ນໄດ້ແບ່ງອອກເປັນແຕ່ລະເຂດດັ່ງນີ້:

| ສັນຍາລັກ Zone | ອະທິບາຍ Description of zone | ເນື້ອທີ່ (ເຮັກຕາ) (ha) | H Height (m) | E Coverage ratio (%) | COS Plot ratio |
|---|---|---|---|---|---|
| Zpp-Ua | ເຂດປົກປັກຮັກສາເມືອງເກົ່າ Historical town conservation zone | 130 | 20 (26)* | 75 (75)* | 2 (5)* |
| Zpp-Ub | ເຂດສະຖານບູຮານ Ancient site conservation zone | 60 | 7 (12)* | 50 (75)* | 0.7 (2.5)* |
| UAa | ເຂດສູນການຄ້າ ແລະ ປົກຄອງ Administration and trade central zone | 1,120 | 26 (60)* | 60 (80)* | 4 (10)* |
| UBa | ເຂດອ້ອມໃຈກາງເມືອງທີ່ນອນໃນແລວການບິນ Urban inner zone within aircraft flying zone | 721 | 20 (26)* | 60 (75)* | 1.5 (6)* |
| UBb | ເຂດອ້ອມໃຈກາງເມືອງ Urban inner zone | 3,158 | 20 (50)* | 60 (70)* | 3 (8)* |
| UCa | ເຂດລຽບແມ່ນ້ຳທີ່ນອນໃນແລວການບິນ Mekong riverbank zone with aircraft flying zone | 295 | 10 (25)* | 50 (70)* | 1 (4)* |
| UCb | ເຂດລຽບແມ່ນ້ຳຂອງ Mekong riverbank zone | 584 | 10 (30)* | 50 (70)* | 1 (6)* |
| UDa | ເຂດອ້ອມຮອບຕົວເມືອງທີ່ນອນໃນແລວການບິນ Urban surrounding zone within aircraft flying zone | 55 | 7 (15)* | 40 (65)* | 0.7 (3*) |
| UDb | ເຂດອ້ອມຮອບຕົວເມືອງທີ່ຕິດພັນກັບກະສິກຳ Urban surrounding zone relevant to agricultural activities | 9,225 | 20 (25)* | 50 (65)* | 2 (4)* |
| UF | ເຂດອ້ອມຮອບຕົວເມືອງທີ່ມີທ່າຂະຫຍາຍຕົວ Village surrounded by rice field | 1,195 | 10 (40)* | 40 (60)* | 1(3)* |
| UEa | ເຂດຂະຫຍາຍຕົວເມືອງ Urban expansion zone | 5,838 | 23 (60)* | 50 (70)* | 5 (8)* |
| UEb | ເຂດສົ່ງເສີມການພັດທະນາຕົວເມືອງ Urban expansion zone (Sub-center) | 9,885 | - | - | - |
| UEi | ເຂດອຸດສາຫະກຳ Urban industrial zone | 3,130 | 15 (30)* | 40 (50)* | 1.5 (4)* |
| Ta | ເຂດຂົນສົ່ງ Transport zone | 397 | - | - | - |
| T | ເຂດຂົນສົ່ງ Transport zone | 443 | - | - | - |
| Ef | ເຂດການສຶກສາ Education zone | 292 | 30 | 50 | 4 |
| Em | ເຂດທະຫານ ແລະ ປ້ອງກັນຊາດ Military zone | 82 | - | - | - |
| N | ເຂດກະສິກຳ Agricultural zone | 22,992 | 10 | - | - |
| NE | ເຂດສະຫງວນ Public preservation zone | 1,998 | - | - | - |
| | ລວມເນື້ອທີ່ທັງໝົດ Total area | 61,000 | - | - | - |

( )* ສຳລັບຄວາມສູງ (H), ສຳປະສິດການນຳໃຊ້ທີ່ດິນ (COS), ອັດຕາສ່ວນການນຳໃຊ້ທີ່ດິນ (E) ຕ້ອງຂຶ້ນກັບເງື່ອນໄຂໃນກໍລະນີພິເສດໃນ 4 ເຂດຄື:
1. ເຂດປົກປັກຮັກສາຕົວເມືອງເກົ່າ ແລະ ມໍລະດົກທາງດ້ານບູຮານສະຖານ
2. ເຂດການປົກຄອງ
3. ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ
4. ເຂດແລວສະໜາມບິນ

ຕ້ອງປະຕິບັດຕາມລະບຽບສະເພາະຂອງແຕ່ລະເຂດ.

ຂໍ້ມູນເພີ່ມເຕີມສາມາດເຂົ້າເບິ່ງໄດ້ທີ່ VirGo; https://urbangis.mpwt.gov.la

ທ່ານສາມາດອ່ານສະບັບເອເລັກໂຕຣນິກໄດ້ທີ່ນີ້ →

ດັດແກ້ ແລະ ຈັດພິມໂດຍ: ກອງເລຂາ ການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ ump.secretariat.laos@gmail.com

ຈົດໝາຍຂ່າວ UMP

# ບ້ານເຮົາ

4 5

ລວມສະບັບ 4 ແລະ 5 / ຕຸລາ 2023

## 'ບ້ານເຮົາ' ແມ່ນຫຍັງ?

ບ້ານເຮົາແມ່ນຈົດໝາຍຂ່າວທີ່ສະໜອງຂໍ້ມູນກ່ຽວກັບ ການພັດທະນາຕົວເມືອງໃນນະຄອນຫຼວງວຽງຈັນ ແລະ ເຂດຖັດໄປ. ຈົດໝາຍຂ່າວບໍ່ພຽງແຕ່ຕີພິມຂ່າວສານສຳລັບຜູ້ປະກອບອາຊີບໃນຂະແໜງສະຖາປັດຕະຍາກຳ ແລະ ການວາງແຜນຜັງເມືອງເທົ່ານັ້ນ ແຕ່ຫາກຍັງເປັນຂໍ້ມູນຂ່າວສານສຳລັບຜູ້ທີ່ມີຄວາມສົນໃຈໃນການພັດທະນາຕົວເມືອງອີກດ້ວຍ.



Community Workshop in Vientiane Photo by Nok

## ເນື້ອໃນຫຼັກ

# ເປີດກວ້າງ! ການພັດທະນາຕົວເມືອງ

### ການແບ່ງປັນຂໍ້ມູນແຜນທີ່ ທີ່ເປັນອັນໜຶ່ງອັນດຽວກັນ ເພື່ອໃຫ້ຮັບຮູ້ອະນາຄົດຂອງ ນະຄອນຫຼວງວຽງຈັນ.

ທ່ານເຄີຍເຂົ້າຮ່ວມການພັດທະນາຕົວເມືອງບໍ່? ນະຄອນຫຼວງວຽງຈັນມີການພັດທະນາຢ່າງໄວວາໃນຖານະເປັນສະພາບແວດລ້ອມໃນການດຳລົງຊີວິດ, ເຮັດວຽກ ຫຼື ສະພາບແວດລ້ອມໃນການຢູ່ອາໄສ ເຊິ່ງມີຜົນສະທ້ອນຕໍ່ກັບການດຳລົງຊີວິດຂອງພວກເຮົາ. ຈາກນີ້ໄປ, ຜູ້ຢູ່ອາໄສ, ນັກທຸລະກິດ ແລະ ແມ່ນແຕ່ເດັກນ້ອຍໃນຕົວເມືອງກໍ່ຈະມີບົດບາດສຳຄັນໃນການພັດທະນາຕົວເມືອງຫຼາຍຂຶ້ນ. ແຕ່ເຮົາຈະສາມາດເຂົ້າຮ່ວມການພັດທະນາຕົວເມືອງໄດ້ແນວໃດ? ປັດຈຸບັນນີ້, ມີແຜນທີ່ເວັບຂໍ້ມູນທີ່ໄດ້ເຜີຍແຜ່ສຳລັບປະຊາຊົນ, ເຊິ່ງເປັນຊ່ອງທາງທີ່ເປີດກວ້າງການປຶກສາຫາລືລະຫວ່າງຜູ້ຄົນ ເພື່ອສົມທຽບໃຫ້ເຫັນສະພາບປັດຈຸບັນ ແລະ ອະນາຄົດ ເທິງແຜນທີ່ອັນດຽວກັນ. ຕອນນີ້, ເຮົາມາຮອດຍຸກສະໄໝໃໝ່ ນັ້ນກໍ່ຄືຍຸກທີ່ປະຊາຊົນສາມາດສະເໜີ ແລະ ລົງມືໃນການພັດທະນາຕົວເມືອງໃນນະຄອນຫຼວງວຽງຈັນ.

# ທ່ານສາມາດເຂົ້າອ່ານຈົດໝາຍຂ່າວບ້ານເຮົາ ນະຄອນຫຼວງວຽງຈັນ ຜ່ານເວັບຂໍ້ມູນ VirGo

## Vientiane integrated urban information GIS-based open data Platform

## ລະບົບລວບລວມ-ເຜີຍແຜ່ຂໍ້ມູນຂ່າວສານພູມີສາດດ້ານຜັງເມືອງນະຄອນຫຼວງວຽງຈັນ

'VirGo' ໄດ້ຮັບການເປີດຕົວໂດຍກະຊວງ ຍທຂ, ເຊິ່ງເປັນເວັບໄຊ້ສຳລັບການແບ່ງປັນຂໍ້ມູນແຜນທີ່, ເອກະສານ ແລະ ການລາຍງານການເຄື່ອນໄຫວກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບການພັດທະນາຕົວເມືອງນະຄອນຫຼວງວຽງຈັນ ສຳລັບພົນລະເມືອງທຸກຄົນ.



VirGo ຈະຊ່ວຍສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງກັບການພັດທະນາຕົວເມືອງ ເພື່ອຮັບມືກັບໄພທຳມະຊາດ ແລະ ສ້າງຄວາມຄົງທົນໃຫ້ແກ່ລະບົບໂຄງລ່າງພື້ນຖານດ້ານເຕັກນິກ ແລະ ທີ່ຢູ່ອາໄສ.

ທ່ານ ນາງ ວິໄລຄຳ ໂພສາລາດ,
ຮອງລັດຖະມົນຕີ, ກະຊວງໂຍທາທິການ ແລະ ຂົນສົ່ງ



VirGo ຈະມີປະໂຫຍດຫຼາຍຕໍ່ເຈົ້າໜ້າທີ່ລັດຖະບານ, ຜູ້ປະກອບການທຸລະກິດເອກະຊົນ ແລະ ຊາວເມືອງຕາມລຳດັບ. ນະຄອນຫຼວງວຽງຈັນ ສະໜັບສະໜູນໃຫ້ມີການເຜີຍແຜ່ເວັບຂໍ້ມູນ VirGo ແລະ ກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ (UMP).

ທ່ານ ພູຂົງ ບັນນະວົງ,
ຮອງເຈົ້າຄອງນະຄອນຫຼວງວຽງຈັນ




### ແຜນຜັງລວມການນຳໃຊ້ທີ່ດິນ ແລະ ໂຄງລ່າງຢູ່ເທິງແຜນທີ່



## ທົດລອງນຳໃຊ້

https://urbangis.mpwt.gov.la

QR Code to access VirGo

### ກໍລະນີນຳໃຊ້ 1: ການກໍ່ສ້າງເຮືອນ ຫຼືອາຄານຂອງທ່ານ



ເຂດນີ້ແມ່ນເໝາະສົມທີ່ຈະສ້າງເຮືອນ ຫຼືອາຄານໃດໜຶ່ງບໍ່? ມີໄຟຟ້າເຂົ້າເຖິງບໍ່? ທ່ານໄດ້ຍື່ນຂໍການອະນຸຍາດປຸກສ້າງຫຼືຍັງ? ທ່ານສາມາດເຂົ້າກວດເບິ່ງຂໍ້ມູນເຫຼົ່ານີ້ໄດ້ທັນທີໃນເວັບຂໍ້ມູນ VirGo!

### ກໍລະນີນຳໃຊ້ 2 : ການປ້ອງກັນອັກຄີໄພ

VirGo ຈະຊ່ວຍບອກໃຫ້ຮູ້ວ່າຈຸດຫົວຈ່າຍນ້ຳມອດໄຟໃກ້ບ້ານທ່ານຢູ່ໃສ, ເຊິ່ງຈະຊ່ວຍໃຫ້ຊຸມຊົນມີຄວາມປອດໄພຂຶ້ນ.



### ກໍລະນີນຳໃຊ້ 3: ແຜນພັດທະນາໃນອະນາຄົດ



ໃນເວັບຂໍ້ມູນ VirGo ທ່ານສາມາດເຂົ້າເບິ່ງແຜນຂະຫຍາຍຕາໜ່າງເສັ້ນທາງໃນອະນາຄົດ. ສົນທະນາຮ່ວມກັນກ່ຽວກັບ ນະຄອນຫຼວງວຽງຈັນໃນອະນາຄົດ ໂດຍການນຳໃຊ້ແຜນທີ່ໃນມືຂອງທ່ານ.

# ລາຍງານ ກອງປະຊຸມ ກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ (UMP) ຄັ້ງທີ 4 ແລະ 5

ກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ (UMP) ແມ່ນກົນໄກທຳອິດໃນການແບ່ງປັນຂໍ້ມູນຂ່າວສານ ແລະ ການປຶກສາຫາລື ໂດຍຜ່ານຫຼາກຫຼາຍຊ່ອງທາງເຊັ່ນ: ການປະຊຸມ, ສຳມະນາ, Web site ສຳລັບການພັດທະນາຕົວເມືອງໃນນະຄອນຫຼວງວຽງຈັນ.
ກອງປະຊຸມ UMP ຄັ້ງທີ 4 ແລະ 5 ໄດ້ຈັດຂຶ້ນໃນມໍ່ໆມານີ້ ພາຍໃຕ້ຫົວຂໍ້ "ເປີດກວ້າງ! ການພັດທະນາຕົວເມືອງ ~ ທົດລອງນຳໃຊ້, GIS-PLATFORM, VirGo".

## ກອງປະຊຸມ UMP ຄັ້ງທີ 4 : ການສຳມະນາເປີດກວ້າງສຳລັບປະຊາຊົນໃນນະຄອນຫຼວງວຽງຈັນ

### ປຶກສາຫາລືຄວາມເປັນໄປໄດ້ຂອງການນຳໃຊ້ ແລະ ຄວາມຍືນຍົງຂອງເວັບຂໍ້ມູນ VirGo ສຳລັບການພັດທະນາຕົວເມືອງ

ກອງປະຊຸມ UMP ຄັ້ງທີ 4 ເຊິ່ງເປັນການສຳມະນາເປີດກວ້າງສຳລັບປະຊາຊົນ ໄດ້ຈັດຂຶ້ນໃນວັນທີ 26 ກັນຍາ 2023 ຢູ່ນະຄອນຫຼວງວຽງຈັນ, ໂດຍໃຫ້ກຽດເປັນປະທານຮ່ວມຂອງທ່ານ ນະລິງໄຊ ມົວປະດິດ, ຮອງຫົວໜ້າ ກົມເຄຫາ ແລະ ຜັງເມືອງ ແລະ ທ່ານ ຈັນທະວົງໂສ ອຸດົມເດດ, ຮອງຫົວໜ້າ ສະຖາບັນໂຍທາທິການ ແລະ ຂົນສົ່ງ. ໃນກອງປະຊຸມໄດ້ມີການຝຶກຫັດ ແລະ ຈັດເວທີສົນທະນາຮ່ວມກັບຫຼາຍພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ຂະແໜງການຂອງລັດ ທັງສູນກາງ ແລະ ທ້ອງຖິ່ນ, ບໍລິສັດເອກະຊົນ ແລະ ປະຊາຊົນ ເພື່ອສ້າງຄວາມເຂົ້າໃຈໃນການນຳໃຊ້ ແລະ ປະສິດທິພາບຂອງເວັບຂໍ້ມູນ ແລະ ເພື່ອແລກປ່ຽນຄວາມຄິດກ່ຽວກັບ ຂໍ້ມູນຂ່າວສານທີ່ຈະເພີ່ມລົງໃສ່ເວັບຂໍ້ມູນ.

ຄຳຄິດເຫັນຈາກຜູ້ເຂົ້າຮ່ວມກອງປະຊຸມ

VirGo ອາດຈະຊ່ວຍອຳນວຍຄວາມສະດວກໃຫ້ແກ່ພວກເຮົາໃນການອອກແບບອາຄານ ແລະ ການກໍ່ສ້າງ.
ບໍລິສັດທີ່ປຶກສາອອກແບບ

VirGo ຄວນຈະເຂົ້າເຖິງໄດ້ຫຼາຍຂຶ້ນ ແລະ ມີຄວາມໝັ້ນຄົງ.
ຕາງໜ້າຈາກປະຊາຊົນ

ຂໍ້ມູນໃນ VirGo ແມ່ນສຳຄັນ ແລະ ຈຳເປັນສຳລັບພວກເຮົາ.
ບໍລິສັດອອກແບບ

VirGo ຕ້ອງເຮັດໃຫ້ໃຊ້ໄດ້ງ່າຍເພື່ອດຶງດູດຄວາມສົນໃຈຂອງພົນລະເມືອງ ແລະ ຄວາມຍືນຍົງ.
ບໍລິສັດທີ່ປຶກສາ ແລະ ອອກແບບ

VirGo ຈະໄດ້ຂະຫຍາຍໄປສູ່ຕົວເມືອງອື່ນໆ ຖ້າຫາກວ່າມີການນຳໃຊ້ຫຼາຍ.
ພະນັກງານລັດ







Photo by UMP Secretariat

## ກອງປະຊຸມ UMP ຄັ້ງທີ 5 : ການບັນຍາຍເປີດກວ້າງຢູ່ໂຮງຮຽນມັດທະຍົມສົມບູນວຽງຈັນ

### ນັກຮຽນນຳໃຊ້ VirGo ເພື່ອຈຳລອງການວາງແຜນຜັງເມືອງສຳລັບອະນາຄົດຂອງນະຄອນຫຼວງວຽງຈັນ

ກອງປະຊຸມ UMP ຄັ້ງທີ 5 ເຊິ່ງເປັນການບັນຍາຍເປີດກວ້າງໃຫ້ແກ່ຄົນລຸ້ນໃໝ່ ເຊິ່ງເປັນຄົນໃນ "ຍຸກດິຈິຕ໋ອນ" ໄດ້ຈັດຂຶ້ນໃນວັນທີ 28 ກັນຍາ 2023 ຢູ່ນະຄອນຫຼວງວຽງຈັນ, ໂດຍການໃຫ້ກຽດເປັນປະທານຂອງອາຈານ ແສງເພັດ ບຸດສະບາປະເສີດ, ຮອງຜູ້ອຳນວຍການໂຮງຮຽນມັດທະຍົມສົມບູນວຽງຈັນ.

ໃນການບັນຍາຍດັ່ງກ່າວໄດ້ມີການເຮັດກິດຈະກຳກ່ຽວກັບ ການວາງຜັງເມືອງຢູ່ທີ່ຫ້ອງປະຊຸມຂອງໂຮງຮຽນ. ນັກຮຽນຊັ້ນມໍ 7 ໄດ້ເຮັດການຈຳລອງຕົວເມືອງນະຄອນຫຼວງວຽງຈັນໃນອະນາຄົດຜ່ານຂໍ້ມູນທີ່ເຜີຍແຜ່ໃນ VirGo ດ້ວຍການນຳໃຊ້ໂທລະສັບ.

ຄຳຄິດເຫັນຂອງນັກຮຽນ

ສ້າງສວນທາລະນະໃຫ້ຫຼາຍຂຶ້ນ ເພື່ອເປັນບ່ອນພັກຜ່ອນ

ແກ້ໄຂບັນຫາການສັນຈອນແອອັດ

ຄວນເຜີຍແຜ່ເວັບຂໍ້ມູນ VirGo ໃຫ້ທຸກຄົນຮູ້

ສ້າງການຂົນສົ່ງສາທາລະນະໃຫ້ທຸກຄົນສາມາດເຂົ້າເຖິງໄດ້ງ່າຍ ໂດຍສະເພາະແມ່ນຄົນພິການ

ການບັນຍາຍເປີດກວ້າງແມ່ນເປັນໂອກາດທີ່ດີໃນການຮຽນຮູ້ກ່ຽວກັບຜັງເມືອງ







Photo by Nok

## Urban Development TIPS

Introducing urban development laws, institutions, and initiatives, this issue features **General Urban Plan (GUP)**.

## Which 'Land use' zone does your place belong to?

Have you ever heard about the General Urban Plan (GUP)? Vientiane Capital has been developed according to a 'land use plan', and it is called the GUP.

The GUP predetermines each area in the city to be urbanized, developed, or preserved for nature. Land use policies define various land use zones, such as "Historical Town Conservation Zone," "Urban Expansion Zone, " "Agricultural Zone, " and so on. Since building height and area requirements in the zones are also specified, nothing can be built without prior permission.

Construction without regard for these rules would lead to disorderly city formulation, and proper land use following the GUP would shape a green and livable capital city.

Which land use zone is yours? Let's find out on VirGO web now.



General Urban Plan (GUP) In Vientiane

## Land Use Zones

Land use zones are divided into the following categories.

| ສັນຍາລັກ<br>Zone | ອະທິບາຍ<br>Description of zone | ເນື້ອທີ່ (ເຮັກຕາ)<br>(ha) | H<br>Height (m) | E<br>Coverage ratio (%) | COS<br>Plot ratio |
|---|---|---|---|---|---|
| Zpp-Ua | ເຂດປົກປັກຮັກສາເມືອງເກົ່າ<br>Historical town conservation zone | 130 | 20 (26)* | 75 (75)* | 2 (5)* |
| Zpp-Ub | ເຂດສະຖານບູຮານ<br>Ancient site conservation zone | 60 | 7 (12)* | 50 (75)* | 0.7 (2.5)* |
| UAa | ເຂດສູນການຄ້າ ແລະ ປົກຄອງ<br>Administration and trade central zone | 1,120 | 26 (60)* | 60 (80)* | 4 (10)* |
| UBa | ເຂດອ້ອມໃຈກາງເມືອງທີ່ນອນໃນແລວການບິນ<br>Urban inner zone within aircraft flying zone | 721 | 20 (26)* | 60 (75)* | 1.5 (6)* |
| UBb | ເຂດອ້ອມໃຈກາງເມືອງ<br>Urban inner zone | 3,158 | 20 (50)* | 60 (70)* | 3 (8)* |
| UCa | ເຂດລຽບແມ່ນ້ຳທີ່ນອນໃນແລວການບິນ<br>Mekong riverbank zone with aircraft flying zone | 295 | 10 (25)* | 50 (70)* | 1 (4)* |
| UCb | ເຂດລຽບແມ່ນ້ຳຂອງ<br>Mekong riverbank zone | 584 | 10 (30)* | 50 (70)* | 1 (6)* |
| UDa | ເຂດອ້ອມຮອບຕົວເມືອງທີ່ນອນໃນແລວການບິນ<br>Urban surrounding zone within aircraft flying zone | 55 | 7 (15)* | 40 (65)* | 0.7 (3*) |
| UDb | ເຂດອ້ອມຮອບຕົວເມືອງທີ່ຕິດພັນກັບກະສິກຳ<br>Urban surrounding zone relevant to agricultural activities | 9,225 | 20 (25)* | 50 (65)* | 2 (4)* |
| UF | ເຂດອ້ອມຮອບຕົວເມືອງທີ່ມີທ່າຂະຫຍາຍຕົວ<br>Village surrounded by rice field | 1,195 | 10 (40)* | 40 (60)* | 1(3)* |

| ສັນຍາລັກ<br>Zone | ອະທິບາຍ<br>Description of zone | ເນື້ອທີ່ (ເຮັກຕາ)<br>(ha) | H<br>Height (m) | E<br>Coverage ratio (%) | COS<br>Plot ratio |
|---|---|---|---|---|---|
| UEa | ເຂດຂະຫຍາຍຕົວເມືອງ<br>Urban expansion zone | 5,838 | 23 (60)* | 50 (70)* | 5 (8)* |
| UEb | ເຂດສົ່ງເສີມການພັດທະນາຕົວເມືອງ<br>Urban expansion zone (Sub-center) | 9,885 | - | - | - |
| UEi | ເຂດອຸດສາຫະກຳ<br>Urban industrial zone | 3,130 | 15 (30)* | 40 (50)* | 1.5 (4)* |
| Ta | ເຂດຂົນສົ່ງ<br>Transport zone | 397 | - | - | - |
| T | ເຂດຂົນສົ່ງ<br>Transport zone | 443 | - | - | - |
| Ef | ເຂດການສຶກສາ<br>Education zone | 292 | 30 | 50 | 4 |
| Em | ເຂດທະຫານ ແລະ ປ້ອງກັນຊາດ<br>Military zone | 82 | - | - | - |
| N | ເຂດກະສິກຳ<br>Agricultural zone | 22,992 | 10 | - | - |
| NE | ເຂດສະຫງວນ<br>Public preservation zone | 1,998 | - | - | - |
| ລວມເນື້ອທີ່ທັງໝົດ<br>Total area | | 61,000 | - | - | - |

( )* For height (H), Land use efficiency (COS), Land use ratio (E) must depend on the special conditions in the case of 4 zones as follows:

1. Historical town and ancient site preservation zones
2. Administration zone
3. Military zone
4. Flying zone

must follow the specific rules of each area.

For more information on VirGo ; https://urbangis.mpwt.gov.la

Ban Hao Electronic version available here →

Edited and published by Urban Management Platform Secretariat

ump.secretariat.laos@gmail.com

UMP NEWSLETTER

# Ban Hao

4 5

The 4th and 5th Joint Issue / October 2023

### What is 'Ban Hao'?

Ban Hao provides information on urban development in Vientiane and beyond. The newsletter is not only for professionals in the field of architecture and urban planning, but also for anyone who is interested in urban development.



Community Workshop in Vientiane Photo by Nok

## Feature

# Open! Urban Development

### Spread the common maps realizing the future Vientiane.

Have you ever been involved in urban development initiatives? Vientiane Capital has rapidly transformed into the living, working, and staying environment for its residents, significantly impacting our daily lives. From now on, residents, businesses, and even children who are part of this city will play an increasingly important role in urban development. But what sparks this participation? Now, web maps designed for citizens are readily available, enabling open discussions among people by allowing them to compare current and future scenarios on the same map using your smart devices. This marks the dawn of a new era where citizens actively engage in and advocate for urban development in Vientiane Capital.

# Check Ban Hao, Vientiane via VirGo

Vientiane integrated urban information GIS-based open data Platform

MPWT has finally launched 'VirGo,' a web portal for sharing digital maps, documents, and activity reports related to Urban Development in Vientiane Capital for all citizens.



VirGo would empower the management and solve the issues rerated to the urban developments to handle with natural disasters and build a resilient for technical infrastructures system and housing.

H.E Madame Vilaykham PHOSALATH,
Vice Minister of MPWT



VirGo is valuable and significant for government officials, private business operators, and citizens. Vientiane Capital supports the dissemination of VirGo and the Urban Management Platform (UMP).

H.E. Phoukhong BANNAVONG,
Vice Mayor of Vientiane Capital




GUP & Infra data showing on the Web Map



## Give it a go

https://urbangis.mpwt.gov.la

QR Code to access VirGo

### Use case 1: Constructing your building

Is it an optimal position to build a house or building there? Is electricity available in that area? Have you applied for a construction permit? Go to VirGo, and you will find all information you need!

### Use Case 2: Taking Fire Prevention

VirGo indicates the location of your nearest fire hydrant, which enhances community safety.

### Use Case 3: Envisioning the future

VirGo displays future road networks. Let's discuss the future of Vientiane by swiping and scrolling through the maps in your hand.

# Report The 4th and 5th Urban Management Platform (UMP)

The Urban Management Platform (UMP) serves as the first information-sharing and discussion mechanism for urban development in Vientiane Capital, utilizing various channels like meetings, workshops, and Websites. The recently held 4th and 5th UMP sessions were entitled "Open! Urban development ~ GIVE IT A GO, GIS-PLATFORM, VirGo".

## The 4th UMP : Open Seminar for citizens in Vientiane

### Discussed the potential of utilizing and sustaining VirGo for Urban Development

The 4th UMP meeting, the Open Seminar for citizens, took place on 26th September 2023 in Vientiane Capital. It was honorably co-chaired by Mr. Nalongxay MYVAPADITH, Deputy Director General of DHUP, and Mr. Chanthavangso OUDOMDETH, Deputy Director General of PTI. The project team organized exercises and panel discussions involving various stakeholders, including relevant government agencies, local authorities, private construction-design companies, and villages. The aim was to promote understanding of the VirGo's usage and effectiveness and to exchange ideas regarding new data and information.

**Participants' Voice**

VirGo should be more accessible and stable.
Representative citizens

VirGo might succor us to facilitate building design and construction.
Design Consultant

The data in VirGo is essential for us.
Design company

VirGo must simplify for citizens' attraction and sustainability.
Design and Consultant Company

VirGo would expand to other cities, if it becomes popular.
Government officer





Photo by UMP Secretariat

## The 5th UMP : Open Lecture in Vientiane High School

### Students use VirGo to simulate Urban Planning for the future Vientiane

The 5th meeting UMP meeting, serving as the open lecture for the so-called "Digital Native" generation, took place on 28th September 2023 in Vientiane Capital. It received support from Mr. Sengphet BOUTSABAPASEUTH, Vice Principal of the Vientiane Secondary School. The project team conducted an urban planning workshop in the school hall, where seventh graders simulated the future of Vientiane using open data from the VirGo web on their own smart devices.

**Students' Voice**

Eliminate traffic congestion.

Increase parks to play outside.

Everyone must know VirGo!

Make public transport more accessible for disabled people.

Open Lecture was a good opportunity to learn urban planning.





Photo by Nok